# ທ່ຽວມຽນມ້າ
# ບູຊາເຈດີຄຳ



ປະສົບການມ່ວນໆ ດີໆ ຈາກເຈັດມື້ໃນມຽນມ້າ ໂດຍ ດວງເດືອນ ບຸນຍາວົງ

ຈັດພິມໂດຍ
ຄ.ພ.ພ.

# ທ່ອງມຽນມ້າບູຊາເຈດີຄຳ



ປະສົບການມ່ວນໆດີໆ ຈາກເຈັດມື້ໃນມຽນມ້າ

ໂດຍ ດວງເດືອນ ບຸນຍາວົງ

ບັນທຶກຮູບ ໂດຍ ພອນໄຊ ບໍຣິບູນຕຣະກູນ

## *ສາລະບັນ*


ຄຳອະນຸໂມທະນາ IV

ຄຳນຳ V

1. ປະຫວັດສາດ ການເມືອງ ການປົກຄອງ 1

ລຳດັບເຫດການ ພາຍຫລັງ ໄດ້ເປັນເອກະລາດ ຈາກອັງກິດ 8

2. ສັງຄົມ ວັດທະນະທຳ

ຄວາມສະຫງົບສຸກກາງມໍລະສຸມ 13

ຂຽວ ເຫລືອງ ເຮືອງເຮືອ 18

ບ່າວນຸ່ງສະໂລ່ງ ຄ້ຽວໝາກ ! ສາວທາແປ້ງ ທານະກະ! 21

ຫົ້ວປິ່ນໂຕ ຕົກນ້ຳ ! 24

ກິນພ້ຽງ ຄ້ຽວໝາກ ດື່ມນ້ຳຊາ 24

ສິລະປະ ດົນຕີ ຟ້ອນອີ່ປ໊ອກ 29

ສາສະໜາ ແລະແຮງສັດທາ 33

ແຜ່ນຄຳປີວ ຂອງທານ ທຸກຄົນ ແລະຄົນທຸກ 35




ແຜ່ນດິນຄຳແຜ່ນດິນຂຽວ : ຢັກງາມ ຫີນອ່ອນ ໄມ້ສັກ 39
ກິນແຊບແບບມຽນມ້າ 41

3. ຊົມວັດ ໄຫວ້ທາດ ບູຊາເຈດີ 45
ໄຫວ້ພະທາດອິນແຂວນໃນແດນພະໂຄ ຫຼື ຫົງສາວະດີ 46
ເຈດີ ສູງທີ່ສຸດ ໃນຫົງສາວະດີ 54
ພະລາຊະວັງຂອງພະເຈົ້າບຸເລງນອງ 56
ກິນລົມ ຊົມຕາເວັນຕົກດິນ ເໜືອທົ່ງເຈດີແຫ່ງພຸກາມ 63
ພິທີບູຊາພະມະຫາໄມຍະມຸນີ 75
ປື້ມຫົວໃຫຍ່ທີ່ສຸດໃນໂລກ 79
ຂຶ້ນຈອມພູມັນດາເລຍຄີລີ ຊົມແສງສີອັດສະດົງ 81
7.000 ຊີວິດ ໃນວັດປະດອງ ດາວໂອ 84
ມື້ສຸດທ້າຍແລ້ວ 89
ບູຊາ ພະທາດ ຊະເວດາກອງ ຫຼື ເຈດີຄຳ 92



## ຄໍາອະນຸໂມທະນາ

ດົນນານມາແລ້ວທີ່ອາຕະມາເຄີຍໄປຢ້ຽມຢາມ ປະເທດພະມ້າ ຫຼື ມຽນມ້າ ໃນປະຈຸບັນ ແລະໄດ້ໄປສຶກສາຮໍ່າຮຽນ ຢູ່ທີ່ນັ້ນລະຍະນຶ່ງ ຕັ້ງແຕ່ລາວບໍ່ທັນມີການປ່ຽນແປງທາງການເມືອງ ຢູ່ໃນທັງສອງປະເທດ. ເມື່ອປະເທດລາວ ສະຖາປະນາເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອາຕະມາມີໂອກາດໄປຢ້ຽມຢາມດິນແດນແຫ່ງເຈດີຄໍາຫຼາຍເທື່ອ ແຕ່ເປັນການໄປຢ່າງເປັນທາງການຕາມຕໍາແໜ່ງແລະໜ້າທີ່ ໃນນາມຄະນະນໍາຝ່າຍສົງຂອງລາວຈຶ່ງເປັນການຮູ້ຈັກ ແລະການສໍາຜັດກັບຜູ້ຄົນແລະວັດທະນະທໍາຂອງປະເທດນີ້ ເທົ່າທີ່ເວລາແລະເງື່ອນໄຂເອື້ອອໍານວຍໃຫ້.

ແຕ່ການໄປຂອງອາຕະມາ ເມື່ອຕົ້ນເດືອນ ກໍລະກົດ ປີ ພ.ສ. 2551 ນັ້ນຖືວ່າ ເປັນການໄປທັດສະນະສຶກສາ ແບບວິຊາການ ແລກປ່ຽນປະສົບການກັບໜ່ວຍງານ ທີ່ເຄື່ອນໄຫວກິດຈະກໍາເພື່ອສັງຄົມຄ້າຍຄືກັນກັບໂຄງການພຸດທະສາສະໜາເພື່ອການພັດທະນາໃນລາວ (ຄ.ພ.ພ.) ອັນໄດ້ເຮັດໃຫ້ອາຕະມາໄດ້ສໍາຜັດກັບບັນຍາກາດອີກແບບນຶ່ງ ຈຶ່ງໄດ້ຮັບຮູ້ ແລະມີທັດສະນະທີ່ຕ່າງໄປ.

ໃນຄະນະທີ່ຮ່ວມເດີນທາງໄປໃນຄັ້ງນີ້ ມີ ນາງດວງເດືອນ ບຸນຍາວົງ ທີ່ເປັນທັງນັກຂຽນ ນັກເຄື່ອນໄຫວດ້ານສັງຄົມ ແລະນັກສັງເກດການທີ່ສະດຸ້ງໄວ ກັບ ທ່ານພອນໄຊ ບໍຣິບູນຕະກູນ ນັກຖ່າຍຮູບສາຍຕາແຫຼມ, ທັງສອງຄົນໄດ້ບັນທຶກເຫດການຜ່ານຕົວອັກສອນ ແລະຮູບພາບທີ່ສະທ້ອນອອກຈາກຄວາມປະທັບໃຈ ບົດຮຽນແລະຄວາມເຂົ້າໃຈ ຄວາມເຫັນໃຈຕໍ່ປະເທດບ້ານໃກ້ເຮືອນຄຽງ ເຊິ່ງໃນອະດີດມີຄວາມສໍາຄັນ ບົດບາດ ແລະອິດທິພົນໃນພາກພື້ນ ພໍສົມຄວນ ເປັນປະເທດນຶ່ງທີ່ຜ່ານຜ່າຄວາມເຈັບປວດຈາກການຕົກເປັນຫົວເມືອງຂຶ້ນຂອງຕາເວັນຕົກຍາວນານ ມີຄວາມ

ຫຼາກຫຼາຍທາງວັດທະນາທຳຂອງຫຼາຍເຊື້ອຊາດຊົນເຜົ່າ ແລະອັນຕົ້ນຕໍ ເປັນດິນແດນທີ່ພະພຸດທະສາສະໜາເລີຍຮຸ່ງເຮືອງ ຈົນຢາກຂະໜານນາມ ວ່າ ແມ່ນສຸວັນນະພູມ. ດ້ວຍຈຸດປະສົງຢາກໃຫ້ພະສົງລາວ ກໍຄື ຄາລະວາດ ອອກຕົນຍາດໂຍມຊາວພຸດລາວໂດຍທົ່ວໄປ ໄດ້ຮູ້ຈັກປະເທດນີ້ດີຂຶ້ນ ອັນຈະ ນຳມາເຊິ່ງຄວາມເຂົ້າໃຈຮັກແພງກັນ ແລະມີຄວາມປາຖະໜາດີຕໍ່ກັນ ຍິ່ງໆຂຶ້ນນັ້ນ ປຶ້ມຫົວນີ້ ອາດຈະເປັນປຶ້ມທີ່ຫາອ່ານໄດ້ຍາກໃນວົງການ ຈັດພິມປຶ້ມໃນປະເທດນີ້ ອາຕະມາ ຈຶ່ງຂໍອະນຸໂມທະນາ ນຳອົງການ Quaker Lao Service ປະຈຳ ສ.ປ.ປ.ລາວ ທີ່ໄດ້ສະໜັບສະໜຸນການ ຈັດພິມແລະການເດີນທາງ, ອົງການເສມສິກຂາໄລ ປະເທດໄທ, ທີ່ຍາມ ໃດ ກໍເຕັມປ່ຽມໄປດ້ວຍເມດຕາທຳ ຊຸກຍູ້ການເຄື່ອນໄຫວວຽກງານຂອງ ຄ.ພ.ພ. ໃຫ້ມີບາດກ້າວໜັກແໜ້ນດ້ວຍທຸກຮູບການ ບໍ່ວ່າຈະເປັນການ ສ້າງຊັບພະຍາກອນມະນຸດ ແລະການຈັດພິມປຶ້ມຕຳລາວິຊາການ ທີ່ເປັນ ປະໂຫຍດ.

ຂໍໃຫ້ກຸສົນກຳ ທີ່ທຸກທ່ານໄດ້ຮ່ວມກັນກະທຳລົງໃນຄັ້ງນີ້ ຈົ່ງນຳເອົາແຕ່ ສຸຂະ ພະລະ ໄຊຊະນະ ອັນຊອບທຳ ມາສູ່ທ່ານທັງຫຼາຍດ້ວຍເຖີ້ນ.

ປະທານໂຄງການ ພຸດທະສາສະໜາເພື່ອການພັດທະນາ
ທີ່ ວັດປ່ານາຄູນນ້ອຍ ມ.ນາຊາຍທອງ

ພຣະອາຈານອອຍ ຊາລີ ກັນຕະສີໂລ





ຊື່ປຶ້ມ ທ່ຽວມຽນມ້າ ບູຊາເຈດີຄຳ
ປະສົບການມ່ວນໆດີໆຈາກ ເຈັດມື້ ໃນມຽນມ້າ


ດວງເດືອນ ບຸນຍາວົງ ຂຽນເລົ່າເລື່ອງ

ພອນໄຊ ບໍຣິບູນຕຣະກູນ ບັນທຶກຮູບ

ບັນນາທິການ ບໍລິສັດ ດອກເກດການພິມ ຈຳກັດ

ອອກແບບຈັດໜ້າສິລະປະ ໂດຍ ບໍລິສັດ ດອກເກດການພິມ ຈຳກັດ

ຮູບໜ້າປົກ ໂດຍ ສະມິດທິ ທະນາບິທີໂຊດ

ຈັດພິມໂດຍ: ໂຄງການພຸດທະສາສະໜາເພື່ອການພັດທະນາ (ຄ.ພ.ພ.)

ອຸປະຖຳການພິມ ໂດຍ ເຄວກເກີ ລາວ (Quaker Service' LAO )

ທະບຽນພິມເລກທີ: 100ພຈ3042009

ພິມຄັ້ງທີ ໜຶ່ງ ເມສາ 2009

ຈຳນວນ 2000 ຫົວ

ພິມທີ່ ພະໄຊ ກຣາບຟິກ

ເມສາ 2009, ນະຄອນຫລວງວຽງຈັນ, ສ.ປ.ປ.ລາວ




# ຄຳນຳ

ຜູ້ຂຽນຮູ້ຈັກສະຫະພາບມຽນມ້າໜ້ອຍຫລາຍ ບໍ່ຕ່າງຫຍັງກັບປະຊາຊົນຄົນລາວໂດຍທົ່ວໄປ ຄືຮູ້ໂດຍຜ່ານຂ່າວຄາວທາງສື່ ແລະຄວາມຈື່ຈຳທີ່ເຫລືອຄ້າງຈາກວິຊາປະຫວັດສາດສະໄໝຢູ່ມັດທະຍົມ ເຊິ່ງສ່ວນໃຫຍ່ກ່າວເຖິງການເຮັດເສິກສົງຄາມຂອງບັນດາກະສັດອານາຈັກໃກ້ຄຽງ ໃນພາກພື້ນດຽວກັນ. ໃນລະຫວ່າງຄຼິດສະຕະວັດທີ 14-18 ສາມອານາຈັກໃຫຍ່ ຄື ອະຍຸທະຍາ/ອັງວະ-ຫົງສາວະດີ ແລະລ້ານຊ້າງ ເຮັດເສິກສົງຄາມຕໍ່ກັບພໍສົມຄວນ, ຄົນລາວສ່ວນໃຫຍ່ ຮູ້ຈັກຊື່ສຽງຂອງບຸເຣງນອງ (ພຼະເຈົ້າ ບັນທະບຸເຣງນອງ) ເຈົ້າຊີວິດກຸງຫົງສາວະດີ ທີ່ຍົກທັບມາຕີນະຄອນວຽງຈັນ ໃນສະໄໝພຼະເຈົ້າໄຊຍະເຊດຖາທິຣາດຮອດສອງເທື່ອ. ເມື່ອສົງຄາມລະຫວ່າງລັດໃກ້ຄຽງຣ້າຍລົງແດ່ ກໍມີອຳນາດໃໝ່ແຜ່ເຂົ້າມາ ຄື ຈັກກະພັດຈາກຕາເວັນຕົກເຊັ່ນ ອັງກິດ, ຝຣັ່ງ... ນັບແຕ່ປາຍສະຕະວັດທີ 18 ເປັນຕົ້ນມາ ບັນດາປະເທດໃນອາຊີອາຄະເນສ່ວນໃຫຍ່ ຕົກຢູ່ໃນສະພາບຄ້າຍຄຽງກັນ ຄືກາຍເປັນອານານິຄົມເມືອງຂຶ້ນ ທັງໂດຍກົງ



ແລະທາງອ້ອມເຊັ່ນ ຫວຽດນາມ ຂະເໝນ(ກຳພູຊາ)ແລະ ອານາຈັກລາວ ຕົກເປັນເມືອງ ຂຶ້ນຂອງຝຣັ່ງ ພະໂຄ ຫຼືຫົງສາວະດີ(ມຽນມ້າໃນອະດີດ) ເປັນອານານິຄົມຂອງອັງກິດ-ອິນເດຽ ແລະອື່ນໆ. ຈັກກະພັດຕາເວັນຕົກ ຈັດການທຸກຢ່າງໃຫ້ເປັນໄປເພື່ອຜົນປະໂຫຍດຂອງພວກເຂົາ. ດັ່ງນັ້ນ ຄວາມສຳພັນ ຖານບ້ານໃກ້ເຮືອນຄຽງ ການຕິດຕໍ່ຫາກັນລະຫວ່າງສອງ ລັດຈຶ່ງຈືດຈາງຫ່າງເຫີນໄປ, ຄວາມເຂົ້າໃຈໃນ ເລື່ອງວັດທະນະທຳຂອງ ກັນແລະກັນຜິວເຜີນບາງເບົາ ມີຄົນລາວໜ້ອຍແທ້ໆທີ່ຮູ້ຈັກສິລະປະວັດທະ ນະທຳ ວັນນະຄະດີ ຂອງປະຊາຊົນມຽນມ້າ, ອາດຈະເວົ້າໄດ້ຮອດວ່າ ລາວ ຍັງບໍ່ມີນັກການສຶກສາເລື່ອງມຽນມ້າ ຫຼື ສຶກສາກ່ຽວກັບມຽນມ້າຢ່າງ ເລິກເຊິ່ງກໍໄດ້ ແລະໃນທາງດຽວກັນ ຄົງມີນັກວິຊາການມຽນມ້າທີ່ສຶກ ສາກ່ຽວກັບລາວໜ້ອຍຫລາຍ ຫຼືບໍ່ມີເລີຍຊ້ຳ. ໂຊກດີແຕ່ວ່າ ຄວາມສຳພັນ ລະຫວ່າງຄະນະສົງລາວ ກັບຄະນະສົງມຽນມ້າ ບໍ່ໄດ້ຂາດຕອນໄປ ດ້ວຍວ່າ ມີພະສົງລາວຫຼາຍຕົນຫຼາຍຮູບ(4)ໄດ້ໄປສຶກສາຮ່ຳຮຽນຢູ່ ມະຫາວິທະຍາ ໄລພຸດທະສາສະໜາໃນຢາງກູ້ນ ມາເກືອບທຸກຍຸກທຸກສະໄໝ, ສ່ວນວ່າ ຄວາມສຳພັນໃນລະດັບຊາດແລະທາງການທູດ ກໍຢູ່ໃນຂັ້ນດີສົມຄວນ ດ້ວຍ



ວ່າ ພັກແລະລັດຖະບານແຫ່ງ ສ.ປ.ປ.ລາວ ຍາມໃດ "ກໍມີແນວທາງການຕ່າງປະເທດທີ່ສ້າງສັນ... ບົນພື້ນຖານເຄົາລົບອະທິປະໄຕແລະຜືນແຜ່ນດິນອັນຄົບຖ້ວນຂອງກັນບໍ່ແຊກແຊງເຂົ້າໃນວຽກງານຂອງກັນແລະກັນ... (ມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກປະຊາຊົນປະຕິວັດລາວ, ແຜນນະໂຍບາຍໃຫຍ່ ຂໍ້ 7, ໜ້າ 182, ຈັດພິມ ໂດຍວາລະສານອະລຸນໃໝ່, 2006).

ຂ້ອຍເກີດມີຄວາມສົນໃຈຢາກໄປມຽນມ້າ ຕັ້ງແຕ່ໄດ້ຕິດຕາມຊົມລາຍການ "ລ່ອງນໍ້າຂອງ" ຢູ່ໂທລະພາບລາວເມື່ອ ປີ 2007 ຜ່ານແລ້ວ ດັ່ງນັ້ນເມື່ອມີບຸນວາສະໜາໄດ້ຕິດຕາມພະອາຈານໃຫຍ່ ດຣ. ຊາລີ ກັນຕະສີໂລພ້ອມດ້ວຍຄະນະສົງອີກຈໍານວນໜຶ່ງ ຈຶ່ງມີຄວາມປິຕິຍິນດີຫຼາຍ. ຄະນະຂອງພະອາຈານໄດ້ຮັບນິມົນໄປແລກປ່ຽນບົດຮຽນ ເລື່ອງການພັດທະນາຊຸມຊົນກັບໜ່ວຍງານຊ່ອຍເຫລືອສັງຄົມ ແລະວັດທີ່ມີໂຮງຮຽນ. ດ້ວຍວ່າວັດແລະພະສົງໃນມຽນມ້າ ມີສ່ວນຮ່ວມຢູ່ໃນການຈັດການສຶກສາຂັ້ນປະຖົມມັດທະຍົມຢ່າງສໍາຄັນ. ປະມານກັນວ່າເກືອບ 30% ຂອງເດັກໃນໄວຮຽນຂັ້ນປະຖົມຂອງປະເທດ ໄດ້ຮັບການສຶກສາຢູ່ໃນວັດກວ່າ1,500 ແຫ່ງ.



ຜູ້ນຳທ່ຽວຂອງພວກເຮົາ(ທີ່ເປັນຄົນມຽນມ້າລັດສານ ປາກເວົ້າລາວ ໄທ ລ່ຽນໄຫລ) ຈັດລາຍການໃຫ້ໄປຊົມບູຮານສະຖານ ສາສະນະສະຖານ ໃນເມືອງອື່ນໆກ່ອນແລ້ວ ມື້ສຸດທ້າຍຈຶ່ງຊົມ ນະຄອນຢາງກຸ້ງ ແລະພະທາດຊະເວດາກອງ, ໂດຍບອກວ່າຖ້າໄປເຫັນ ພູະທາດຊະເວດາກອງ ກ່ອນໄປເຫັນບ່ອນອື່ນໆ ກໍຈະບໍ່ຕື່ນເຕັ້ນ ແຕ່ສຳລັບຂ້ອຍ ເຫັນວ່າແຕ່ລະບ່ອນມີຄວາມງາມສະຫງ່າໜ້າຊົມ ມີຄວາມໝາຍທາງປະຫວັດສາດແລະສັກສິດບໍ່ໜ້ອຍກວ່າກັນ. ດັ່ງນັ້ນໃນລະຍະເຈັດມື້ ທີ່ໄດ້ທ່ອງທ່ຽວຢ້ຽມຊົມຫ້າເມືອງໃຫຍ່ ຂອງມຽນມ້າໃນຄັ້ງນີ້ ຂ້ອຍຈຶ່ງຢາກຂຽນບອກເລົ່າເຖິງປະສົບການຄວາມຮູ້ສຶກຕໍ່ສິ່ງທີ່ໄດ້ພົບໄດ້ເຫັນ ເທົ່າທີ່ຄວາມເຂົ້າໃຈຂອງຕົນເອງອະນຸຍາດໃຫ້ ໂດຍຫວັງວ່າທ່ານຜູ້ອ່ານເອງກໍຈະໄດ້ຄວາມຮູ້ ແລະມ່ວນໃຈໄປນຳ, ຢ່າງໜ້ອຍສຸດ ກໍຈະມີຄວາມເຂົ້າໃຈຕໍ່ສະພາບທີ່ເປັນຢູ່ໃນປະເທດນີ້ຕື່ມອີ້ກ, ມີຄວາມຮູ້ສຶກເຫັນ ໃຈຊາວມຽນມ້າກໍຄືປະຊາຊົນບັນດາເຜົ່າໃນປະເທດນີ້ຫຼາຍຂຶ້ນ.

ສຸດທ້າຍ ຂ້ອຍຢາກສະຫລຸບວ່າ ຫຼັງຈາກການໄດ້ເຫັນໄດ້ຊົມຜືນແຜ່ນດິນແຫ່ງປະເທດນີ້ແລ້ວ ຄຳກ່າວຂານ "ສຸວັນນະພູມ ຫຼື ແຜ່ນດິນຄຳ





ແຫ່ງອາຊີຕາເວັນອອກສຽງໃຕ້" ນີ້ ຄົງຈະມີສູນກາງຢູ່ທີ່ ສະຫະພາບມຽນມ້ານີ້ແຫລະ ເພາະວ່າພະທາດເຈດີ ບໍ່ວ່ານ້ອຍໃຫຍ່ຈຳນວນມາກມາຍ ຈະອາຍຸເປັນພັນປີ ຫຼື ຫຼາຍຮ້ອຍປີ, ພຼະພຸດທະຮູບອົງຂະໜາດຫຼາຍສິບແມດຫລື ພຽງຫ້າສິບຊັງຕີແມັດ ກໍລ້ວນແຕ່ທາບທາໂອບຫຸ້ມດ້ວຍແຜ່ນຄຳ ທານ້ຳຄຳ ຫລື ແຜ່ນຄຳປີວ ປະດັບປະດາດ້ວຍແກ້ວປະເສີດເຊັ່ນເພັດນິນຈິນດາ ພໍປານວ່າສິ່ງເຫລົ່ານີ້ໄຮ້ລາຄາ.

ສະພາບການແບບນີ້ ມີຄວາມໝາຍເຊື່ອງຊ້ອນແນວໃດບໍ່ ? ຕາມຫຼັກຄຳສອນຂອງພຼະພຸດທະສາສະໜາ ສິ່ງເຫລົ່ານີ້ບໍ່ມີຄ່າຄວນແກ່ການເຄົາລົບບູຊາ ແມ່ນຫຼືບໍ ? ພຼະພຸດທະຮູບຄຳ ມີຄ່າຄວນບູຊາຍິ່ງກວ່າ ພຼະພຸດທະຮູບໄມ້ ເງິນ ຫລື ຂີ້ກວ່າ ບໍ່?

ຢ່າງໃດກໍດີ ການໄດ້ໄປທ່ຽວຊົມພຽງເຈັດມື້ເທື່ອໜຶ່ງເທື່ອດຽວ ຄົງບໍ່ທັນພຽງພໍທີ່ຈະໃຫ້ຂ້ອຍຄົ້ນຫາ ແລະພົບຄຳຕອບອັນຖືກຕ້ອງ ແລະໜ້າພໍໃຈໄດ້ ແຕ່ມັນກໍໄດ້ເຮັດໃຫ້ຂ້ອຍຮັບຮູ້ ເຂົ້າໃຈໃນສັດຈະທຳຂໍ້ໜຶ່ງດີຂຶ້ນ ຄືບໍ່ວ່າຄົນ ຫຼື ປະເທດຊາດໃດໜຶ່ງ ເມື່ອມີຄາວຈະເລີນຮຸ່ງເຮືອງ ກໍຍ່ອມມີຄາວຫລົ້ມຈົມລົງໄດ້.

ຂໍຂອບໃຈ ເພື່ອນມິດຊາວມຽນມ້າທຸກຄົນ ອົງການເສມສຶກຂາໄລ ອົງການ ແຄວກເກີ ປະຈຳລາວ (Quaker Service Lao) ທີ່ເຮັດໃຫ້ມີປື້ມຫົວນີ້ ປາກົດອອກມາສູ່ສາຍຕາສັງຄົມລາວ. ຖ້າມີສິ່ງໃດຜິດພາດ ຂ້ອຍຂໍນ້ອມຮັບເອົາຄຳຕິຊົມ ແລະຖືວ່າ ເປັນຂໍ້ບົກພ່ອງຂອງຕົນເທົ່ານັ້ນ.

*ດວງເດືອນ ບຸນຍາວົງ*

*ວຽງຈັນ ເດືອນ ຕຸລາ 2008*



# ໑

# ປະຫວັດສາດ ການເມືອງ ການປົກຄອງ



ແຜນທີ່ສະແດງເຂດປົກຄອງ
ຕ່າງໆໃນສະຫະພາບ ມຽນມ້າ
ປັດຈຸບັນ



ສະຫະພາບມຽນມ້າ ຫຼື ອະດີດສະຫະພາບພະມ້າ ໃນເມື່ອກ່ອນ ອັງກິດພາເອີ້ນວ່າ Burma ແລະກາຍມາເປັນ "ສະຫະພາບມຽນມ້າ ຫຼື Union of Myanma/ ໃນປີ1992 ມີຊື່ເຕັມເປັນທາງການວ່າ Pyihtaungsu Hsoshelit Thammata Myanma Naingngantaw ຫຼື ສາທາລະນະລັດສັງຄົມນິຍົມແຫ່ງສະຫະພາບມຽນມ້າ, ເປັນປະເທດບ້ານໃກ້ເຮືອນຄຽງຂອງລາວ ໂດຍມີແມ່ນ້ຳຂອງເປັນຊາຍແດນ ກ້ຳຕາເວັນຕົກສຽງເໜືອ ຕິດຈອດກັບແຂວງຫຼວງນ້ຳທາລະຍະ 236 ກິໂລແມດ. ມີເມືອງຫຼວງ ຊື່ວ່າ ນາຍປີວເຕົາ (Naypyitaw) ຢູ່ໃນເຂດປົກຄອງມັນດາເລຍ(Mandalay Division) ຍ້າຍຈາກຢາງກູນ ເມື່ອປີ 2007 ນີ້ເອງ, ແຕ່ ຢາງກູນ ອະດີດນະຄອນຫລວງທີ່ເປັນສູນກາງວັດທະນະທຳ ຍຸກອານານິຄົມ (ແຕ່ປີ1885-1947) ກໍຍັງຄົງເປັນເມືອງໃຫຍ່ອັນດັບໜຶ່ງຂອງປະເທດຢູ່.

ສະຫະພາບມຽນມ້າ ມີພົນລະເມືອງປະມານ 55ລ້ານຄົນ ປະກອບດ້ວຍ 100 ກວ່າ ຊົນຊາດຊົນເຜົ່າ ແບ່ງເປັນ 7 ລັດ (States) ຄື 1- ກະຊິນ (Kachin), 2- ຊິນ (Chin), 3-ຣາຄີນ( Rakhine),4- ສານ (Shane), 5-ມອນ(Mon), 6-ກະຢີນ (Kayin), 7-ກະຢາ (Kayah), 7 ເຂດປົກຄອງ(Divisions) ຄື 1- ຢາງກູນ(Yangon), 2- ມະເກວ (Magway),3-ມັນດາເລຍ(Mandalay), 4-ສະກາຍ(Sagaing), 5- ພະໂຄ(Bago), 6-ເອວຢາວະດີ (Ayeyarwady), 7-ທະນິນທະຣີ (ຕະນາວສີ) (Tanin-tharyi).

ສະກຸນເງິນ ຊື່ວ່າ ຈ໊າດ(Jart) ມີທັງຫລຽນ ແລະທະນະບັດໃບລະ 100, 200, 500 ແລະ 1,000 ອັດຕາແລກປ່ຽນ(ຕອນພວກເຮົາໄປ) 1000 ຈ໊າດ: 8500 ກີບ (ຫລື 1 US $)

ດິນແດນສ່ວນທີ່ເປັນ ສະຫະພາບມຽນມ້າໃນປັດຈຸບັນປະມານ ເມື່ອ 1000 ກວ່າປີກ່ອນ ເປັນນະຄອນລັດເອກະລາດເລັກໆນ້ອຍໆຂອງຜູ້ຄົນຫຼາຍຊາດຫຼາຍເຜົ່າ. ສອງເຊື້ອຊາດໃຫຍ່ທີ່ມີອຳນາດ ຄຽງຄູ່ກັນມາແມ່ນ ຊາດມອນ(Mon) ແລະມ່ານ (Mar ຕາມສຽງລາວ ແລະຢູ່ໃນເອກະສາດປະຫວັດສາດລາວ) ທີ່ຜັນປ່ຽນມາເປັນ ມ່າ ແລະ ພະມ້າ(ຕາມການສະກົດຂອງອັງກິດ ລາຍລະອຽດເບິ່ງຕື່ມໃນໝາຍເຫດທ້ອຍທ້າຍ) ແລະຄືນມາເປັນ ມຽນມ້າ. ສະນັ້ນເວລາເວົ້າເຖິງອະດີດ ກໍອາດບໍ່ຖືກຕ້ອງທັງໝົດ ຖ້າຈະເອີ້ນວ່າ ພະມ້າ/ມຽນມ້າ ເຊິ່ງເປັນຊື່ເອີ້ນໃນຍຸກປັດຈຸບັນ. ໃນສະໄໝກ່ອນມັກເອີ້ນເອົາ ສູນກາງວັດທະນະທຳ ເປັນຕົວແທນອານາຈັກ ເຊັ່ນ ຈະເອີ້ນວ່າ ເຈົ້າຊີວິດແຫ່ງພຸກາມ (Pegu) ເມື່ອ ພຸກາມເປັນເມືອງສູນກາງ, ເປັນເມືອງຫຼວງເປັນຕົ້ນ. ຢ່າງໃດກໍຕາມ ເພື່ອຄວາມສະດວກໃນການຂຽນ-ອ່ານ ຈຶ່ງຂໍໃຊ້ພະມ້າ/ມຽນມ້າ ຄວບຄູ່ກັນໄປຂໍໃຫ້ຜູ້ອ່ານຄິດຄືນຫາກາລະເວລາທາງປະຫວັດສາດຕື່ມ.

ນັກປະຫວັດສາດທັງຫຼາຍ ນັບເອົາຕົ້ນຄິດຕະສະຕະວັດທີ11 (ປະມານ ຄ.ສ.1044) ເປັນຈຸດຕັ້ງຕົ້ນການສະຖາປະນາພຸກາມ(Pegu) ໂດຍເຈົ້າຊີວິດອະນຸຣຸດທະ ວ່າເປັນອານາຈັກທຳອິດຂອງຊາວມຽນມ້າ. ອານາຈັກພຸກາມເຂັ້ມແຂງຮຸ່ງເຮືອງຂຶ້ນດ້ວຍການຮວບຮວມເອົາອານາຈັກໃກ້ຄຽງ ເຊັ່ນເມືອງ ສະເທີມ (ສຸທຳມາວະດີ)ຂອງຊາວມອນ ຈາກນັ້ນ ພຸກາມກໍຮັບແລະກືນເອົາເອົາສິລະປະວັດທະນະທຳແລະ ສາສະໜາພຸດນິກາຍເຖລະວາດແບບມອນ ມາເປັນວັດທະນະທຳຂອງມຽນມ້າສືບຕໍ່ມາ.

ອານາຈັກພຸກາມ ຮຸ່ງເຮືອງຕິດຕໍ່ກັນ ຢູ່ເກືອບ 300 ປີ ມາຮອດປາຍສະຕະວັດທີ 13(ຄ.ສ.1280) ຊາວມອນໃນພາກໃຕ້ກໍຟື້ນຟູອຳນາດຄືນໄດ້

ແລ້ວ ສະຖາປະນານະຄອນຫຼວງໃໝ່ ຊື່ວ່າ ເມາະຕະມະ ຂຶ້ນທາງໃຕ້, ປ່ອຍໃຫ້ອານາຈັກພຸກາມ ຖືກ ກອງທັບອັນຍິ່ງໃຫຍ່ເຂັ້ມແຂງຂອງມົງໂກນ ມ້າງເພທຳລາຍ, ເຊື່ອກັນວ່າ ໃນປາງສົງຄາມນີ້ ພະເຈດີກໍ່ດ້ວຍດິນຈີ່ທີ່ ອາດຈະມີຢູ່ເປັນຫຼາຍພັນອົງຖືກຂຸດກົ່ນ ແລະເພພັງລົງໃນແມ່ນ້ຳເອວຢາ ວະດີ(ຂຽນຕາມແບບມຽນມ້າໃໝ່ ວ່າ Ayeyarwady) ບໍ່ໜ້ອຍ. ນອກ ຈາກນີ້ພຸກາມ ກໍຍັງຕ້ອງປະເຊີນໜ້າກັບສັດຕູທາງພາກເໜືອຕື່ມຄື ອາ ນາຈັກສານ(ລັດສານ ຕົ້ນຕະກູນເຜົ່າລື້), ເຮັດໃຫ້ລາຊະວົງພຸະເຈົ້າອະນຸ ຣຸດທະ ເສື່ອມອຳນາດລົງ. ນັບແຕ່ນັ້ນມາ ຊົນຊາດມອນກັບມຽນມ້າ ກໍຜັດ ປ່ຽນກັນ ຂຶ້ນເປັນເຈົ້າປົກຄອງຜືນແຜ່ນດິນນີ້ ບາງຍຸກແມ່ນກະສັດເຊື້ອ ສາຍມອນ ເຊັ່ນເຈົ້າຊີວິດພິນຍະອຸ ທີ່ຍ້າຍ ເມືອງຫລວງມາ ຫົງສາວະດີ ໃນປີ ຄ.ສ. 1379 (ພ.ສ.1912 - ຮ່ວມສະໄໝກັບພະຍາຟ້າງຸ່ມ) ບາງລະຍະ ກໍແຕກແບ່ງກັນອອກເປັນຫລາຍອານາຈັກ ຈົນມາຮອດສະໄໝເຈົ້າຊີວິດ ບາຍິ່ນ ຫຼື ບຸເຣງນອງ"(ເຊື້ອຊາດມອນ) ຂຶ້ນສະເຫວີຍລາດໃນປີ ຄ.ສ. 1551(ພ.ສ. 2094 ຮ່ວມສະໄໝກັບ ເຈົ້າໄຊຍະເຊດຖາທິຣາດ ແຫ່ງລ້ານ ຊ້າງວຽງຈັນ),ຫົງສາວະດີ ຈຶ່ງສາມາດແຜ່ອຳນາດກວມຍຶດເອົາທັງແຜ່ນ ດິນມອນ ສານ ແລະລ້ານນາ ເຂົ້າເປັນອັນໜຶ່ງອັນດຽວກັນໄດ້. ເຈົ້າຊີວິດ ບຸເຣງນອງ ໄດ້ຊື່ວ່າເປັນກະສັດຜູ້ຍິ່ງໃຫຍ່ ມີອຳນາດຫຼາຍທີ່ສຸດໃນຍຸກນັ້ນ ຈົນມີນັກປະພັນ(ໄທ)ນຳເອົາຊີວິດມາແຕ່ງ ເປັນນະວະນິຍາຍຂະໜານ ນາມວ່າ "ຜູ້ຊະນະສິບທິດ", ໄດ້ຍົກທັບມາຕີວຽງຈັນແຕກຕັ້ງສອງເທື່ອ ແຕ່ບໍ່ຍຶດຄອງໄວ້, ຕີກຸງອະຍຸທະຍາ (ສະຫຍາມ) ແຕກສອງເທື່ອ ແລະຍຶດ ຄອງລ້ານນາໃຫ້ຂຶ້ນຕໍ່ ຫົງສາວະດີ ຢູ່ເປັນເວລາ ດົນນານ.

ເມື່ອໝົດສະໄໝເຈົ້າຊີວິດບຸເຣງນອງ, ພະມ້າໄດ້ແຕກອອກເປັນສາມ ອານາຈັກໃນ ຄ.ສ.1600(ພ.ສ. 2143) ຄື ຕອງອູ(ພະມ້າ), ແປຣ ແລະ

ອັງວະ. ຕໍ່ມາຮອດປີ ຄ.ສ.1752 (ພ.ສ. 2295) ຈຶ່ງມີຊາຍຄົນໜຶ່ງ ຊື່ວ່າ "ອອງໄຈຍະ" ເປັນຄົນທຳມະດາສາມັນ ລຸກຂຶ້ນນຳພາຊາວ ເມືອງຂະບົດຕໍ່ເຈົ້າປົກຄອງເຊື້ອຊາດມອນ ແລ້ວຕັ້ງໂຕຂຶ້ນເປັນເຈົ້າຊີວິດ ຂະນານນາມວ່າ "ເຈົ້າອະລອງພະເຍຣ". ນັບເປັນການຕັ້ງຕົ້ນ ຂອງລາຊະວົງຄອງບອງ, ມາຮອດປີ ຄ.ສ.1755 (ພ.ສ.2298) ອະລອງພະເຍຣ ສາມາດປາບປາມເອົາຫົວເມືອງ ຂອງຊາວມອນທັງໝົດໄດ້ ແລ້ວກໍປ່ຽນຊື່ເມືອງຫລວງ "ຕະເກິງ/ດາກອງ (ທ່າເຮືອຊາວມອນ ມາເປັນ ຢາງກູນ ທີ່ມີຄວາມໝາຍວ່າ"ໝົດສັຽງສັດຕູ ແລ້ວ (ທີຣະພາບ ໂລຫິດຕຣະກູນ, ໜ. 449).

ເຫດການບ້ານເມືອງສະຫງົບສຸກມາຮອດປີ ຄ.ສ.1774 (ພ.ສ. 2317), ຊຽງໃໝ່ທີ່ເຂັ້ມແຂງຂຶ້ນ ຈຶ່ງແຂງຂໍ້ ທັບມາຮ່ວມມືກັບ ລຳປາງ ແລະຂໍເພິ່ງລັດຕະນະໂກສິນ ທີ່ຟື້ນໂຕຈາກການເຮັດສົງຄາມ ກັບທັງສາວະດີໄດ້ ໃນສະໄໝພະເຈົ້າຕາກສິນ ແລະໃນທີ່ສຸດ ຊຽງໃໝ່ກໍໄດ້ເປັນເອກະລາດ ຫຼັງຈາກຕົກ ເປັນປະເທດສະລາດຂອງຫົງສາວະດີ (ພະມ້າ/ມຽນມ້າ) ຢູ່ເຖິງ 200 ກວ່າປີ ແລະ ນັບຕໍ່ແຕ່ນັ້ນ ກໍຂຶ້ນ ຕໍ່ສະຫຍາມ(ໄທ) ຈົນເທົ້າເຖິງປັດຈຸບັນ.

ໃນປີ ຄ.ສ.1824 (ພ.ສ.2367) ພາຍຫລັງຍຶດເອົາອິນເດຽເປັນຫົວ ເມືອງຂຶ້ນໄດ້ຢ່າງສົມບູນແລ້ວ ຈັກກະພັດອັງກິດ ກໍມຸ່ງໜ້າແຜ່ອິດທິກຳລັງອອກມາສູ່ດິນແດນລອງແມ່ນ້ຳເອຍຢາວະດີ (Ayeyarwady). ສົງຄາມລະຫວ່າງອັງກິດ-ອິນເດຽ ກັບພະມ້າ ຄັ້ງທຳອິດລະເບີດຂຶ້ນ, ນັບແຕ່ນັ້ນມາ ຈັກກະພັດອັງກິດ ກໍບຸກໜ້າຍຶດຄອງດິນແດນພະມ້າ ພ້ອມດ້ວຍລັດເອກະລາດທັງຫຼາຍທີ່ຢູ່ອ້ອມຂ້າງໄດ້ເທື່ອລະກ້າວ ໂດຍມີກອງທະຫານອິນເດຽເປັນກຳລັງແຮງ. ສົງຄາມຕໍ່ຕ້ານການຍຶດຄອງດຳເນີນມາຈົນ

ຮອດປີ ຄ.ສ. 1865(ພ.ສ. 2428) ພາຍໃຕ້ລັດຊະການເຈົ້າຊີວິດສີປໍ, ດິນແດນອານາຈັກມຽນມ້າທັງໝົດກໍຕົກເປັນສ່ວນ ໜຶ່ງຂອງອັງກິດ-ອິນເດຽ, ອັງກິດຕັ້ງເມືອງ "ຢາງກູນ" ເປັນນະຄອນຫລວງ. ເຈົ້າຊີວິດສີປໍ ຖືກເນລະເທດໄປຢູ່ ລັດຕະນະຄິລີ ແລະສ້ຽງພະຊົນຢູ່ທີ່ນັ້ນໃນປີ ຄ.ສ. 1916. ອັງກິດສົ່ງພູ່ມະເຫສີສຸພະລັດ ຄືນມາເປັນລາຊິນີປົກຄອງປະເທດພາຍໃຕ້ອັງກິດ ຈຶ່ງຖືໄດ້ວ່າ ພະນາງເປັນລາຊິນີອົງສຸດທ້າຍຂອງລາຊະວົງຄອງບອງ ທີ່ສ້ຽງພະຊົນຢູ່ນະຄອນ ຢາງກູນ ໃນປີ ຄ.ສ. 1925 (ພ.ສ. 2468) ເມື່ອພະຊົນມາຍຸໄດ້ 68 ປີ ຕໍ່ແຕ່ນັ້ນມາ ຖືວ່າລະບອບລາຊາທິປະໄຕໃນລາຊະອານາຈັກໜຶ່ງ ທີ່ເຄີຍຍິ່ງໃຫຍ່ຮຸ່ງເຮືອງມາກວ່າພັນປີ ກໍເຖິງກາລະອາວະສານລົງ.

ແຕ່ເຖິງຈະເປັນຫົວເມືອງຂຶ້ນຢ່າງສົມບູນ ແຕ່ປະຊາຊົນແລະຊົນຊັ້ນນຳຂອງພະມ້າບັນດາເຜົ່າ ກໍບໍ່ຍອມຈຳນົນ ມີການຕໍ່ສູ້ຕໍ່ຕ້ານມາຕະຫຼອດຈົນເຖິງລະຍະລະເບີດສົງຄາມໂລກຄັ້ງທີສອງ ເມື່ອກອງທັບລູກ ພະອາທິດຍີ່ປຸ່ນບຸກເຂົ້າຮອດພະມ້າແລະລັດສານໄດ້ໃນປີ ຄ.ສ.1943 ອັງກິດຍົນຍອມຖອຍອອກ ແຕ່ພໍຍີ່ປຸ່ນ ເສຽໄຊໃຫ້ແກ່ຝ່າຍພັນທະມິດ (ອາເມລິກາ ອັງກິດຝຣັ່ງ...) ໃນປີ ຄ.ສ.1946 ຈັກກະພັດອັງກິດໂງຄືນມາ ຍຶດຄອງພະມ້າອີກ (ຄືດຽວກັບກັບທີ່ ຝຣັ່ງເຮັດກັບອິນໂດຈີນ) ກໍ່ໃຫ້ເກີດການຕໍ່ຕ້ານຮຸນແຮງທີ່ລະເບີດຂຶ້ນພາຍໃຕ້ການນຳພາຂອງ ນາຍພົນອອງຊານ (ເວລາ ນັ້ນອາຍຸ 28 ປີ) ເຊິ່ງໄດ້ຂຶ້ນຍຶດຢ່າງກະທັນຫັນເນື່ອງຈາກມີຜົນງານເຄື່ອນໄຫວໃຕ້ດິນຂັບໄລ່ອັງກິດ ຕອນຍີ່ປຸ່ນບຸກອາຊີ.

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ